ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ

ເລກທີ: 2707--/ຜ-ຟຟລ

ນະຄອນຫຼວງວຽງຈັນ, ວັນທີ 29 AUG 2023

ໃບລາຍງານ

ຮຽນ: ທ່ານ ຫົວໜ້າສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ

ທ່ານ ຜູ້ອຳນວຍການໃຫຍ່ ບໍລິສັດຕະຫຼາດຫຼັກຊັບລາວ ຈຳກັດ ທີ່ນັບຖື,

ເລື່ອງ: ແຈ້ງມະຕິທີ່ສຳຄັນຂອງກອງປະຊຸມສະພາບໍລິຫານສະໄໝວິສາມັນ ຄັ້ງທີ 2/2023.

- ອີງຕາມຂໍ້ຕົກລົງຂອງຄະນະກຳມະການຄຸ້ມຄອງຫຼັກຊັບ ວ່າດ້ວຍການລາຍງານ ແລະ ການເປີດເຜີຍຂໍ້ມູນ ຂອງບໍລິສັດອອກຈຳໜ່າຍຫຼັກຊັບ ແລະ ບໍລິສັດຈົດທະບຽນ (ສະບັບປັບປຸງ) ສະບັບເລກທີ 27/ຄຄຊ, ລົງ ວັນທີ 29 ມີນາ 2022.
- ອີງຕາມລະບຽບຂອງຕະຫຼາດຫຼັກຊັບລາວ ວ່າດ້ວຍການເປີດເຜີຍຂໍ້ມູນ ເລກທີ 330/ຕລຊລ, ລົງວັນທີ 27 ກັນຍາ 2018.

ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ ("ບໍລິສັດ") ຂໍຖືເປັນກຽດແຈ້ງມະຕິທີ່ສຳຄັນ ຂອງກອງປະຊຸມ ສະພາບໍລິຫານສະໄໝວິສາມັນ ຄັ້ງທີ 2/2023 ວັນທີ 29 ສິງຫາ 2023, ມີລາຍລະອຽດລຸ່ມນີ້:

1. ຮັບຮອງການແຕ່ງຕັ້ງ ທ່ານ ວິງສະກຸນ ຍິ່ງຍິງ ເປັນຜູ້ອຳນວຍການໃຫຍ່ຜູ້ໃໝ່ ເພື່ອສືບຕໍ່ປະຕິບັດໜ້າທີ່ບໍລິຫານບໍລິສັດ ແທນ ທ່ານຮັກສາການຜູ້ອຳນວຍການໃຫຍ່ຜູ້ເກົ່າ.

   ແລະ ໃຫ້ນຳສະເໜີເລື່ອງດັ່ງກ່າວຕໍ່ກອງປະຊຸມວິສາມັນຜູ້ຖືຮຸ້ນ ຄັ້ງທີ 2/2023 ເພື່ອຮັບຮອງ.

2. ຮັບຮອງການແຕ່ງຕັ້ງກຳມະການສະພາບໍລິຫານຜູ້ໃໝ່ ເພື່ອປ່ຽນແທນຜູ້ເກົ່າ, ການກຳນົດຜູ້ທີ່ມີອຳນາດໃນການລົງລາຍ ເຊັນຜູກພັນບໍລິສັດ ແລະ ອາຍຸການຂອງບັນດາກຳມະການສະພາບໍລິຫານບໍລິສັດຄື:

   1) ແຕ່ງຕັ້ງທ່ານ ວິງສະກຸນ ຍິ່ງຍິງ ຜູ້ອຳນວຍການໃຫຍ່ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນເປັນກຳມະການ ສະພາບໍລິຫານຜູ້ໃໝ່ ເພື່ອປ່ຽນແທນກຳມະການສະພາບໍລິຫານຜູ້ເກົ່າ.

   ກຳນົດຜູ້ມີອຳນາດໃນການລົງລາຍເຊັນສັນຍາຜູກພັນບໍລິສັດດັ່ງນີ້:

   ກ). ໃຫ້ປະທານສະພາບໍລິຫານ, ຮອງປະທານສະພາບໍລິຫານ ຫລື ຜູ້ອຳນວຍການໃຫຍ່ ເປັນຜູ້ມີອຳນາດໃນ ການລົງລາຍເຊັນຜູກພັນບໍລິສັດ ປະທັບກາບໍລິສັດແຕ່ພຽງຜູ້ດຽວ ຫລື;

   ຂ). ໃຫ້ກຳມະການທ່ານອື່ນ ສອງທ່ານລົງລາຍເຊັນຮ່ວມກັນ ແລະ ປະທັບກາບໍລິສັດ.

   ແລະ ກຳນົດອາຍຸການຂອງກຳມະການສະພາບໍລິຫານທັງໝົດບໍ່ເກີນສອງປີ ໂດຍເລີ່ມນັບແຕ່ມື້ກອງປະຊຸມວິ ສາມັນຜູ້ຖືຮຸ້ນ ຄັ້ງທີ 2/2023 ເປັນຕົ້ນໄປ ແລະ ໃຫ້ນຳສະເໜີເລື່ອງດັ່ງກ່າວຕໍ່ກອງປະຊຸມວິສາມັນຜູ້ຖື ຮຸ້ນ ຄັ້ງທີ 2/2023 ເພື່ອຮັບຮອງ.

ຖະໜົນມິດຕະພາບລາວ-ໄທ, ບ້ານທົ່ງກາງ, ເມືອງສີສັດຕະນາກ, ນະຄອນຫຼວງວຽງຈັນ, ສປປ ລາວ. ຕູ້ ປ. ນ. 2392
ໂທລະສັບ: (856-21) 316 142 ແຟັກ: (856-21) 316 141. ອີເມລ: edlgenhq@edlgen.com.la, ເວັບໄຊທ໌: www.edlgen.com.la

3. ຮັບຮອງການດັດແກ້ກົດລະບຽບ ຂອງບໍລິສັດ ມາດຕາ 9 ວ່າດ້ວຍກຳມະການ ຄື:

1) ດັດແກ້ມາດຕາ 9 ວ່າດ້ວຍກຳມະການ : ປ່ຽນຊື່ ແລະ ຂໍ້ມູນຂອງກຳມະການສະພາບໍລິຫານ.

ແລະ ໃຫ້ນຳສະເໜີເລື່ອງດັ່ງກ່າວຕໍ່ກອງປະຊຸມວິສາມັນຜູ້ຖືຮຸ້ນ ຄັ້ງທີ 2/2023 ເພື່ອຮັບຮອງ.

4. ກຳນົດວາລະກອງປະຊຸມວິສາມັນຜູ້ຖືຮຸ້ນ ຄັ້ງທີ 2/2023 ມີດັ່ງນີ້:

ວາລະທີ 1: ພິຈາລະນາ ແລະ ຮັບຮອງບົດບັນທຶກກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2022.

ວາລະທີ 2: ພິຈາລະນາ ແລະ ຮັບຮອງການແຕ່ງຕັ້ງຜູ້ອຳນວຍການໃຫຍ່ຜູ້ໃໝ່ ເພື່ອປ່ຽນແທນທ່ານ ຮັກສາການຜູ້ອຳນວຍການໃຫຍ່ຜູ້ເກົ່າ.

ວາລະທີ 3: ພິຈາລະນາ ແລະ ຮັບຮອງການແຕ່ງຕັ້ງ ກຳມະການສະພາບໍລິຫານຜູ້ໃໝ່ ເພື່ອປ່ຽນແທນຜູ້ເກົ່າ, ການກຳນົດຜູ້ທີ່ມີອຳນາດໃນການລົງລາຍເຊັນຜູກພັນບໍລິສັດ ແລະ ອາຍຸການຂອງບັນດາກຳມະການສະພາບໍລິຫານບໍລິສັດ.

ວາລະທີ 4: ພິຈາລະນາ ແລະ ຮັບຮອງການດັດແກ້ກົດລະບຽບຂອງບໍລິສັດມາດຕາ 09 ວ່າດ້ວຍກຳມະການ.

ແລະ (1) ມອບອຳນາດໃຫ້ຜູ້ອຳນວຍການໃຫຍ່ ຫຼື ບຸກຄົນທີ່ໄດ້ຮັບມອບໝາຍຈາກບຸກຄົນດັ່ງກ່າວ ເປັນຜູ້ມີອຳນາດໃນການກຳນົດລາຍລະອຽດ ແລະ ເງື່ອນໄຂຕ່າງໆທີ່ຈຳເປັນ ກ່ຽວກັບການກະກຽມເປີດກອງປະຊຸມວິສາມັນຜູ້ຖືຮຸ້ນ ຄັ້ງທີ 2/2023 ໄດ້ທຸກປະການ, ລວມທັງໃຫ້ມີອຳນາດໃນການດຳເນີນການໃດໜຶ່ງ ອັນຈຳເປັນ ລວມທັງການກະກຽມເອກະສານຕ່າງໆ ແລະ ດຳເນີນການໃຫ້ຖືກຕ້ອງຕາມລະບຽບການ ແລະ ກົດໝາຍທີ່ກ່ຽວຂ້ອງ;

ແລະ (2) ແຕ່ງຕັ້ງ ທ່ານ ຄຳມູນ ວິພິງໄຊ, ທ່ານ ຄຳແກ້ວ ວິສີສົມບັດ ແລະ ທ່ານ ປອ. ພັນປະກິດ ອ່ອນພັນດາລາ ກຳມະການສະພາບໍລິຫານອິດສະຫຼະ ເປັນຜູ້ມອບຮັບສັນທະຈາກຜູ້ຖືຮຸ້ນ.

5. ກຳນົດວັນປະຊຸມວິສາມັນຜູ້ຖືຮຸ້ນ ຄັ້ງທີ 2/2023 ໃນວັນທີ **19 ຕຸລາ 2023** ເວລາ **15:00** ໂມງ ທີ່ຫ້ອງປະຊຸມຊັ້ນ 1, ອາຄານສຳນັກງານໃຫຍ່ຂອງລັດວິສາຫະກິດໄຟຟ້າລາວ, ຖະໜົນມິດຕະພາບລາວ-ໄທ, ບ້ານທົ່ງກາງ, ເມືອງສີສັດຕະນາກ, ນະຄອນຫຼວງວຽງຈັນ. ແລະ ມອບອຳນາດໃຫ້ຜູ້ອຳນວຍການໃຫຍ່ ແລະ/ຫຼື ຜູ້ທີ່ໄດ້ຮັບມອບໝາຍຈາກຜູ້ອຳນວຍການໃຫຍ່ ເປັນຜູ້ມີອຳນາດພາຍໃຕ້ກົດໝາຍ ແລະ ລະບຽບການທີ່ກ່ຽວ ຂ້ອງໃນການແກ້ໄຂ ວັນ-ເວລາ ແລະ ສະຖານທີ່ກອງປະຊຸມວິສາມັນຜູ້ຖືຮຸ້ນ ຄັ້ງທີ 2/2023.

ດັ່ງນັ້ນ ຈຶ່ງຮຽນມາຍັງທ່ານເພື່ອຊາບ ແລະໃຊ້ຕາງລາຍງານ.

ດ້ວຍຄວາມນັບຖືເປັນຢ່າງສູງ,

ປະທານສະພາບໍລິຫານ

ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ EDL-Generation Public Company

ສຸລິວັດ ສຸວັນນະຈູມຄຳ